0734

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*************

ກະຊວງການເງິນ

ຄັງເງິນແຫ່ງຊາດ

ເລກທີ 3212 . ຄງ /ຄງຊ

ນະຄອນຫລວງວຽງຈັນ, ວັນທີ 28 JUL 2010

## ແຈ້ງການແນະນຳ

ເຖິງ: ທ່ານຫົວໜ້າຄັງເງິນແຫ່ງຊາດນະຄອນຫຼວງແລະ ປະຈຳແຂວງ

ເລື້ອງ: ການປິດບັນຊີເງິນຝາກຂອງຫົວໜ່ວຍງົບປະມານ, ຫົວໜ່ວຍບໍລິຫານວິຊາການແລະກອງທຶນຂອງລັດຢູ່ໃນລະບົບທະນາຄານເຂົ້າມາຄຸ້ມຄອງ ໃນລະບົບຄັງເງິນແຫ່ງຊາດ

- ອີງຕາມແຈ້ງການຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ0734/ກງ, ລົງວັນທີ 21/04/2010 ກ່ຽວກັບ ການໂອນບັນຊີເງິນຝາກຂອງຫົວໜ່ວຍງົບປະມານ, ກອງທຶນຂອງລັດ ແລະ ຫົວໜ່ວຍບໍລິຫານວິຊາການ ຈາກລະລະບົບທະນາຄານເຂົ້າສູ່ການຄຸ້ມຄອງໃນລະບົບຄັງເງິນແຫ່ງຊາດ.
- ອີງຕາມຄຳແນະນຳວິຊາການຂອງຄັງເງິນແຫ່ງຊາດ ສະບັບເລກທີ່ 3211/ຄງ, ລົງວັນທີ 28/07/2010 ກ່ຽວກັບ ການຈັດຕັ້ງປະຕິບັດ ລາຍຮັບ-ລາຍຈ່າຍຄ່າບໍລິການທາງດ້ານວິຊາການ ແລະ ການປິດບັນຊີເງິນຝາກທະນາຄານຂອງຫົວໜ່ວຍງົບປະມານ, ກອງທຶນຂອງລັດ ແລະ ຫົວໜ່ວຍບໍລິຫານວິຊາການຜ່ານລະບົບຄັງເງິນແຫ່ງຊາດ.

ເພື່ອໃຫ້ການຄຸ້ມຄອງບັນຊີເງິນຝາກຂອງຫົວໜ່ວຍງົບປະມານ, ຫົວໜ່ວຍບໍລິຫານວິຊາການແລະກອງທຶນຂອງລັດທັນມາຄຸ້ມຄອງຜ່ານລະບົບບັນຊີຄັງເງິນແຫ່ງຊາດ ໃຫ້ມີຄວາມເປັນເອກະພາບ ແລະ ສຳເລັດຕາມແຜນການ ທີ່ກະຊວງ ການເງິນໄດ້ກຳນົດໄວ້.

ຫົວໜ້າຄັງເງິນແຫ່ງຊາດແຈ້ງການແນະນຳດັ່ງນີ້:

1. ມອບໃຫ້ຫົວໜ້າຄັງເງິນແຫ່ງຊາດປະຈຳນະຄອນຫຼວງ, ປະຈຳແຂວງປະສານສົມທົບກັບຫົວໜ່ວຍງົບປະມານ, ຫົວໜ່ວຍບໍລິຫານວິຊາການ, ກອງທຶນຂອງລັດ ແລະ ບັນດາທະນາຄານຂອງລັດ ຢູ່ຂັ້ນທ້ອງຖິ່ນຕົນ ຈັດຕັ້ງເຜີຍແຜ່ຂະຫຍາຍບົດແນະນຳ ຂອງລັດຖະມົນຕີວ່າການກະຊວງການເງິນເລກທີ0727/ກງ ແລະ ແຈ້ງການເລກທີ 0734/ກງ ໃຫ້ເປັນຮູບປະທຳ, ສ່ວນດ້ານວິຊາການລະອຽດໃຫ້ອີງໃສ່ຄຳແນະນຳວິຊາການຂອງຄັງເງິນແຫ່ງຊາດ ສະບັບເລກທີ 3211/ຄງ, ລົງວັນທີ 28/07/2010 .



Scanned by CamScanner

. ໃຫ້ຈັດຕັ້ງຜັນຂະຫຍາຍດ້ວຍຮູບການຈັດກອງປະຊຸມວິຊາການ ຮ່ວມກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງທີ່ໄດ້ລະບຸໄວ້ໃນຂໍ້ທີ 1 ຂ້າງເທິງນັ້ນ ເພື່ອກຳນົດແຜນການ, ແບ່ງຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດວຽກງານຮ່ວມກັນເຊັ່ນ: ຄວາມຮັບຜິດຊອບຂອງຄັງເງິນແຫ່ງຊາດປະຈຳທ້ອງຖິ່ນ, ຄວາມຮັບຜິດຊອບຂອງຫົວໜ່ວຍງົບປະມານ, ຫົວໜ່ວຍບໍລິຫານວິຊາການ ແລະ ກອງທຶນຂອງລັດ, ຄວາມຮັບຜິດຊອບຂອງທະນາຄານສາຂາປະຈຳນະຄອນຫຼວງ ແລະ ສາຂາປະຈຳແຂວງ;

2.1 ຄວາມຮັບຜິດຊອບຂອງຄັງເງິນແຫ່ງຊາດປະຈຳນະຄອນຫຼວງ, ປະຈຳແຂວງ ຕ້ອງແນະນຳວິທີການ ແລະ ຂັ້ນຕອນຕ່າງໆ ທີ່ພົວພັນເຖິງວຽກງານວິຊາການຂອງຄັງເງິນແຫ່ງຊາດດັ່ງນີ້:

2.1.1 ການເປີດບັນຊີເງິນຝາກ: ໃຫ້ຫົວໜ່ວຍງົບປະມານ, ຫົວໜ່ວຍບໍລິຫານວິຊາການ ແລະ ກອງທຶນຂອງລັດ ສະເໜີເປີດບັນຊີເງິນຝາກຢູ່ໃນລະບົບຄັງເງິນເປັນແຕ່ລະສະກຸນເງິນ ຕາມລະບຽບການຂອງຄັງເງິນແຫ່ງຊາດ ໂດຍປະກອບແບບຟອມ, ວາງລາຍເຊັນ ແລະ ມອບເງິນຮັບບັນຊີເງິນຝາກເບື້ອງຕົ້ນ;

2.1.2 ການມອບເງິນເຂົ້າບັນຊີເງິນຝາກໃນລະບົບຄັງເງິນ: ມອບເປັນເງິນສົດ ຫຼື ເງິນໂອນເຂົ້າບັນຊີເງິນຝາກຮອງຮັບໜີ້ຕ້ອງສົ່ງໃນລະບົບຄັງເງິນຢູ່ທະນາຄານ ຕາມເລກໝາຍບັນຊີເງິນຝາກທີ່ຄັງເງິນແຫ່ງຊາດປະຈຳນະຄອນຫຼວງ, ປະຈຳແຂວງ ເປີດໄວ້ຢູ່ບັນດາສາຂາ ແລະ ນຳເອົາໃບແຈ້ງມີທີ່ໄດ້ຮັບຈາກທະນາຄານ ນຳສະເໜີຕໍ່ຄັງເງິນແຫ່ງຊາດ ບ່ອນທີ່ຕົນມີບັນຊີເງິນຝາກ;

- ກໍລະນີມອບເງິນສົດຢູ່ຫ້ອງລາຍຮັບ ແລະ ຄັງເງິນສົດ ຂອງຄັງເງິນແຫ່ງຊາດປະຈຳທ້ອງຖິ່ນ ຫຼື ມອບໃນຮູບການອື່ນ (ແຊັກທະນາຄານ) ຕ້ອງໄດ້ວິຊາຕາມລະບຽບການທີ່ໄດ້ກຳນົດໄວ້.

2.1.3 ການຈ່າຍຫຼືຖອນເງິນຢູ່ບັນຊີເງິນຝາກຄັງເງິນ: ຜູ້ສັ່ງການ (ເຈົ້າຂອງບັນຊີ) ຕ້ອງຂຽນແຊັກເພື່ອສັ່ງຈ່າຍເງິນອອກຈາກບັນຊີເງິນຝາກ ພ້ອມດ້ວຍຂັດຕິດເອກະສານຢັ້ງຢືນຕາມລະບຽບການເງິນເຊັ່ນ: ແຜນການຄິດໄລ່, ຂໍ້ຕົກລົງ, ແຜນການນຳໃຊ້ເງິນ, ໃບຄິດໄລ່, ໃບເກັບເງິນ, ໃບທວງໜີ້, ສັນຍາ . . .) ແລະ ສາມາດນຳໃຊ້ເງິນໃນບັນຊີເງິນຝາກຊຳລະໜີ້ສິນບັນຊີພາຍໃນລະບົບ ບັນຊີເງິນຝາກຄັງເງິນດ້ວຍກັນ.

- ການກວດກາເອກະສານກ່ອນການຫັກບັນຊີເງິນຝາກຂອງຜູ້ສັ່ງການ ຫຼື ເຈົ້າຂອງບັນຊີເຊັ່ນ: ກວດກາລາຍເຊັນສົມທຽບກັບແບບຢ່າງລາຍເຊັນ, ເອກະສານຢັ້ງຢືນ, ເປົ້າໝາຍການສັ່ງຈ່າຍ ແລະ ຂໍ້ມູນອື່ນໆທີ່ກ່ຽວຂ້ອງ ເປັນຕົ້ນ,

- ກໍລະນີຈ່າຍຜ່ານລະບົບທະນາຄານແນະນຳໃຫ້ລູກຄ້າຊາບຂັ້ນຕອນວິຊາການຕ່າງໆ ທີ່ມີການພົວພັນກັບທະນາຄານເຊັ່ນ: ຈ່າຍຜ່ານສູນຊຳລະສະສາງຂອງທະນາຄານ, ຈ່າຍແລກປ່ຽນແຊັກ (ແຊັກຄັງເງິນປ່ຽນເປັນແຊັກທະນາຄານ ຫຼື ແບບຟອມອື່ນໆ);

2.1.4 ການສົມທຽບບັນຊີ ແລະ ການສະຫຼຸບລາຍງານ: ແນະນຳວິຊາການ ໃຫ້ບັນດາຫົວໜ່ວຍງົບປະມານ, ຫົວໜ່ວຍບໍລິຫານວິຊາການ ແລະ ກອງທຶນຂອງລັດ, ທີ່ມີລາຍຮັບ-ລາຍຈ່າຍງົບປະມານຂອງລັດ ແລະ ຄ່າບໍລິການທາງດ້ານວິຊາການເພື່ອສະຫລຸບບັນຊີລາຍຮັບ ແລະ ລາຍຈ່າຍຢູ່ໃນບັນຊີເງິນຝາກຂອງຕົນທີ່ເປີດໄວ້ຢູ່ຄັງເງິນແຫ່ງຊາດເປັນແຕ່ລະວັນ, ເດືອນ, ງວດ ແລະ ປີ ແລ້ວສະຫຼຸບສັງລວມການປະຕິບັດລາຍຮັບ-ລາຍຈ່າຍ ສົມ ທຽບກັບ ບັນຊີຄັງເງິນແຫ່ງຊາດເປັນເດືອນ, ງວດ ແລະ ປີ.



Scanned by CamScanner

2.2 ຄວາມຮັບຜິດຊອບຂອງຫົວໜ່ວຍງົບປະມານ, ຫົວໜ່ວຍບໍລິຫານວິຊາການ ແລະ ກອງທຶນຂອງລັດ ຕ້ອງເປັນເຈົ້າການປິດບັນຊີເງິນຝາກຂອງຕົນຢູ່ໃນລະບົບທະນາຄານ ແລະ ໂອນຍອດເຫລືອເງິນດັ່ງກ່າວເຂົ້າບັນຊີເງິນຝາກທີ່ເປີດໄວ້ຢູ່ໃນລະບົບຄັງເງິນ,

2.3 ຄວາມຮັບຜິດຊອບຂອງທະນາຄານ ແມ່ນການອຳນວຍຄວາມສະດວກດ້ານວິຊາການ ຂອງທະນາຄານ ຕໍ່ກັບການປິດບັນຊີຂອງຫົວໜ່ວຍງົບປະມານ, ຫົວໜ່ວຍບໍລິຫານວິຊາການ ແລະ ກອງທຶນຂອງລັດ, ພ້ອມທັງໃຫ້ຄວາມຮ່ວມມືດ້ານວິຊາການອື່ນໆ ຕໍ່ກັບຄັງເງິນແຫ່ງຊາດ ທີ່ພົວພັນເຖິງຂັ້ນຕອນການປິດບັນຊີດັ່ງກ່າວເຂົ້າມາຄຸ້ມຄອງໃນລະບົບຄັງເງິນແຫ່ງຊາດ;

3. ມອບໃຫ້ຫົວໜ້າຄັງເງິນແຫ່ງຊາດ ປະຈຳນະຄອນຫຼວງ, ປະຈຳແຂວງ ເອົາໃຈໃສ່ຈັດຕັ້ງປະຕິບັດ ແຈ້ງການສະບັບນີ້ດ້ວຍຄວາມຮັບຜິດຊອບສູງ, ໃຫ້ປະຕິບັດສຳເລັດຊ້າສຸດບໍ່ໃຫ້ກາຍ ງວດ 2 ສົກປີ 2010-2011, (ລາຍລະອຽດມີແຜນຄັດຕິດມາພ້ອມ)

3.1 ໃຫ້ເລີ້ມປະຕິບັດໃນງວດ4 ສົກງົບປະມານປີ 2009-2010 ເປັນຕົ້ນໄປ ໂດຍອີງໃສ່ແຜນການລະອຽດທີ່ໄດ້ຄັດຕິດມາພ້ອມນີ້,

3.2 ຄະນະຮັບຜິດຊອບຂອງກະຊວງການເງິນຈະໄປລົງທົບ ເພື່ອຊຸກຍູ້ການປະຕິບັດແຈ້ງການສະບັບນີ້ໃນເວລາອັນຄວນ,

3.3 ເວລາປະຕິບັດຕົວຈິງຫາກພົບບັນຫາຕ່າງໆ ຊຶ່ງບໍ່ສາມາດດຳເນີນໄດ້ໃຫ້ລາຍງານຄັງເງິນແຫ່ງຊາດ ຊາບເພື່ອຄົ້ນຄວ້າ ວິທີການແກ້ໄຂໃຫ້ທັນກັບສະພາບການ,

4. ແຈ້ງການສະບັບນີ້ ມີຜົນສັກສິດ ແລະໃຊ້ໄດ້ແຕ່ມື້ລົງລາຍເຊັນເປັນຕົ້ນໄປ,-

ດັ່ງນັ້ນ ຈຶ່ງໄດ້ແຈ້ງມາຍັງທ່ານຊາບ ແລະ ປະຕິບັດຕາມແຈ້ງການແນະນຳສະບັບນີ້ ຢ່າງເຂັ້ມງວດ.

ຫົວໜ້າຄັງເງິນແຫ່ງຊາດ

ຄຸນຍິນ ຄຳມະນີ

ບ່ອນສົ່ງແລະສຳເນົາ

1. ຄັງເງິນແຫ່ງຊາດ 3 ສະບັບ.
2. ຄັງເງິນແຫ່ງຊາດປະຈຳແຂວງ ແລະ ນະຄອນຫຼວງ17 ສະບັບ.
3. ຄະນະປະສານງານ ບັນຊີລວມສູນຄັງເງິນ 5 ສະບັບ.

Scanned by CamScanner